UnityPoint Health

# ບົດສະຫຼຸບຫຍໍ້ເປັນພາສາທຳມະດາ ຂອງລະບຽບວ່າດ້ວຍການຊ່ວຍເຫຼືອດ້ານການເງິນຂອງ

**UNITYPOINT HEALTH**

UnityPoint Health ("UPH") ໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ຫຼາຍຄົນທີ່ມີຄວາມຈຳເປັນໃນການຮັກສາປິ່ນປົວ ແລະ ບໍ່ມີຄວາມສາມາດຈ່າຍຄ່າປິ່ນປົວ. UnityPoint Health ບໍ່ຢາກໃຫ້ຄົນທີ່ບໍ່ມີຄວາມສາມາດຈ່າຍຄ່າປິ່ນປົວເຊົາຮັກສາປິ່ນປົວສຸຂະພາບຂອງພວກເຂົາ. ນີ້ແມ່ນບົດສະຫຼຸບຂອງລະບຽບວ່າດ້ວຍການຊ່ວຍເຫຼືອດ້ານການເງິນຂອງ UnityPoint Health ("FAP").

## ຄວາມພ້ອມຂອງການຊ່ວຍເຫຼືອດ້ານການເງິນ

ທ່ານອາດມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນ ຖ້າຫາກທ່ານບໍ່ສາມາດຊຳລະໃບເກັບເງິນຄ່າປິ່ນປົວຂອງທ່ານ. UnityPoint Health ໃຫ້ການຊ່ວຍເຫຼືອດ້ານການເງິນສຳລັບການບໍລິການປິ່ນປົວທີ່ຈຳເປັນ. ຕົວເລືອກການບໍລິການເຊັ່ນ: ເຄື່ອງສຳອາງແມ່ນຈະບໍ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນ.

## ເງື່ອນໄຂທີ່ຈຳເປັນ

ຍອດລາຍຮັບທັງໝົດຂອງຄົນທີ່ອາໄສຢູ່ໃນເຮືອນຈະຖືກໃຊ້ມາຕັດສິນວ່າ ທ່ານຈະໄດ້ຮັບການຊ່ວຍເຫຼືອບໍ່. ຖ້າລາຍຮັບມີຕ່ຳກວ່າ 200% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ (FPL), ທ່ານຈະບໍ່ຈຳເປັນຕ້ອງຊຳລະຄ່າໂຮງໝໍຂອງທ່ານ. ລາຍຮັບລະຫວ່າງ 200 ຫາ 600% ຕາມຄູ່ມືແນະນຳຂອງ FPL ແມ່ນຈະບໍ່ໄດ້ຈ່າຍຫຼາຍກວ່າຈຳນວນເງິນທີ່ຄິດໄລ່ໃຫ້ຄົນທີ່ມີປະກັນສຸຂະພາບ ແລະ ອາດຈະໄດ້ຮັບສິດທິຫຼຸດລາຄາຕື່ມ. ຖ້າຫາກທ່ານມີຊັບສິນຫຼາຍ, ທ່ານອາດຈະບໍ່ມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນ. ກະລຸນາເບິ່ງລະບຽບການຊ່ວຍເຫຼືອດ້ານການເງິນທັງໝົດຂອງ Unity Point Health (FAP) ສຳລັບຄຳອະທິບາຍ ແລະ ລາຍລະອຽດທັງໝົດ.

## ບ່ອນຊອກຫາຂໍ້ມູນ

ມີຫຼາຍຊ່ອງທາງຊອກຂໍ້ມູນກ່ຽວກັບຂັ້ນຕອນການສະເໜີຂໍ FAP ຫຼື ຂໍເອກະສານ FAP ຫຼື ແບບຟອມຄຳຮ້ອງ FAP ສະບັບສຳເນົາ. ເພື່ອສະໝັກຂໍການຊ່ວຍເຫຼືອດ້ານການເງິນ, ທ່ານອາດຈະ:

- ດາວໂຫຼດຂໍ້ມູນທາງອອນລາຍໄດ້ທີ່ www.unitypoint.org/FAP
- ຂໍຂໍ້ມູນເປັນເອກະສານໂດຍການສົ່ງໜັງສືຫາ: UPH CBO Attn: FA Team, PO Box 35758, Des Moines, IA 50315-4205
- ຫຼືໄປຫາ ພະນັກງານບັນຊີຂອງໂຮງໝໍ .
- ຂໍຂໍ້ມູນໂດຍການໂທຫາຫ້ອງການຮຽກເກັບເງິນພາກກາງຂອງ UnityPoint Health ທີ່ເບີ (844) 849-1260

## ພາສາທີ່ມີ

ອີງຕາມລະບຽບວ່າດ້ວຍການຊ່ວຍເຫຼືອດ້ານການເງິນ, ແບບຟອມ ແລະ ບົດສະຫຼຸບຫຍໍ້ເປັນພາສາທຳມະດາສາມາດສະໜອງໃຫ້ເປັນພາສາຕໍ່ໄປນີ້: ພາສາອັງກິດ, ພາສາສະເປນ, ພາສາຝຣັ່ງ, ພາສາເຢຍລະມັນ, ພາສາລາວ, ພາສາເຊີໂບ-ໂຄຣເອເຊຍ ແລະ ພາສາຫວຽດນາມ. ນອກຈາກນີ້ຍັງມີເອກະສານພິມຂະໜາດໃຫຍ່. UnityPoint Health ອາດຈະເລືອກໃຊ້ການຊ່ວຍເຫຼືອແປພາສາ, ຄູ່ມືການແປ ແລະ ນັກແປພາສາຫຼາຍພາສາທີ່ໄດ້ຮັບການຮັບຮອງຕາມການສະເໜີ. ສຳລັບເອກະສານແປຂອງແບບຟອມການຊ່ວຍເຫຼືອດ້ານການເງິນຂອງ UnityPoint Health, ກະລຸນາໄປທີ່ຫ້ອງການເກັບເງິນຂອງໂຮງໝໍຫຼື ຕົວແທນດ້ວຍການໂທທີ່ເບີ (844) 849-1260.

## ວິທີສະໝັກ

ທ່ານຈະຕ້ອງໄດ້ຕື່ມໃສ່ແບບຟອມການຊ່ວຍເຫຼືອດ້ານການເງິນ. ຟອມທີ່ຕື່ມແລ້ວພ້ອມກັບເອກະສານສະເໜີຈະຖືກສົ່ງໄປຍັງ UnityPoint Health ເພື່ອພິຈາລະນາ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອກ່ຽວກັບຟອມ, ທ່ານອາດຈະຕິດຕໍ່ຫາຫ້ອງການຮຽກເກັບເງິນພາກກາງຂອງ UPH ໄດ້ທີ່ເບີ (844) 849-1260. ເມື່ອສຳເລັດ, ໃບສະເໜີ ແລະ ເອກະສານສະເໜີຂອງທ່ານຈະຕ້ອງໄດ້ສົ່ງຫາ: UPH Central Billing Office, Attn: FA Team, P.O. Box 35758, Des Moines IA 50315-4205.